# ສິດທິຂອງຜູ້ລົງຄະແນນສຽງ

## ★ ທ່ານມີສິດດັ່ງຕໍ່ໄປນີ້ ★

1. **ສິດທິໃນການລົງຄະແນນສຽງຖ້າທ່ານເປັນຜູ້ມີສິດລົງຄະແນນສຽງທີ່ໄດ້ລົງທະບຽນ.** ທ່ານມີສິດລົງຄະແນນສຽງຖ້າທ່ານ:

   - ★ ເປັນພົນລະເມືອງສະຫະລັດອາເມລິກາທີ່ອາໄສຢູ່ ລັດ ຄາລີຟໍເນຍ
   - ★ ມີອາຍຸຢ່າງໜ້ອຍ 18 ປີ
   - ★ ໄດ້ລົງທະບຽນຢູ່ບ່ອນທີ່ທ່ານຢູ່ປະຈຸບັນ
   - ★ ປະຈຸບັນບໍ່ໄດ້ຖືກຕັດສິນໂທດຈຳຄຸກຢູ່ລັດ ຫຼື ລັດຖະບານກາງ ສຳລັບການຕັດສິນໂທດຄວາມຜິດທາງອາຍາ, ແລະ
   - ★ ປະຈຸບັນບໍ່ໄດ້ພົບເຫັນຄວາມບໍ່ສາມາດທາງຈິດທີ່ຈະລົງຄະແນນສຽງໂດຍສານ

2. **ສິດທີ່ລົງຄະແນນສຽງຖ້າທ່ານເປັນຜູ້ລົງຄະແນນສຽງທີ່ລົງທະບຽນເຖິງແມ່ນວ່າຊື່ຂອງທ່ານບໍ່ມີຢູ່ໃນບັນຊີ.**
   ທ່ານຈະລົງຄະແນນສຽງໂດຍໃຊ້ບັດເລືອກຕັ້ງຊົ່ວຄາວ. ການລົງຄະແນນສຽງຂອງທ່ານຈະຖືກນັບເຂົ້ານຳ ຖ້າພະນັກງານເລືອກຕັ້ງກຳນົດວ່າທ່ານມີສິດລົງຄະແນນສຽງໄດ້.

3. **ສິດທີ່ລົງຄະແນນສຽງຖ້າທ່ານຍັງຢູ່ໃນໄລຍະເວລາທີ່ການປ່ອນບັດປິດ.**

4. **ສິດທິໃນການລົງຄະແນນສຽງແບບລັບໆ** ໂດຍບໍ່ມີໃຜລົບກວນທ່ານ ຫຼື ບອກທ່ານວິທີການລົງຄະແນນສຽງ.

5. **ສິດທີ່ຈະໄດ້ຮັບບັດລົງຄະແນນສຽງໃໝ່ ຖ້າທ່ານເຮັດຜິດ,** ຖ້າທ່ານຍັງບໍ່ທັນໄດ້ປ່ອນບັດລົງຄະແນນສຽງ. ທ່ານສາມາດ: **ຂໍນຳເຈົ້າໜ້າທີ່ເລືອກຕັ້ງຢູ່ທີ່ສະຖານທີ່ເລືອກຕັ້ງ** ເພື່ອຂໍບັດລົງຄະແນນສຽງໃໝ່, **ແລກປ່ຽນບັດລົງຄະແນນສຽງຂອງທ່ານເປັນບັດສົ່ງໄປທາງໄປສະນີ** ສຳລັບບັດໃໝ່ ຢູ່ທີ່ຫ້ອງການຈັດການເລືອກຕັ້ງ, ຫຼືຢູ່ສະຖານທີ່ປ່ອນບັດ, ຫຼື **ລົງຄະແນນສຽງໂດຍໃຊ້ບັດເລືອກຕັ້ງຊົ່ວຄາວ.**

6. **ສິດທິໃນການໄດ້ຮັບການຊ່ວຍເຫຼືອໃນການປ່ອນບັດລົງຄະແນນສຽງຂອງທ່ານ** ຈາກທຸກຄົນທີ່ທ່ານເລືອກ, ຍົກເວັ້ນຈາກນາຍຈ້າງ ຫຼື ຕົວແທນສະຫະພັນຂອງທ່ານ.

7. **ສິດທິໃນການສົ່ງໃບປ່ອນບັດລົງຄະແນນສຽງຂອງທ່ານທີ່ໄດ້ເຮັດສຳເລັດຢູ່ສະຖານທີ່ປ່ອນບັດແຫ່ງໃດກໍໄດ້ທີ່ຢູ່** ໃນລັດ California.

8. **ສິດໃນການຂໍເອກະສານເລືອກຕັ້ງເປັນພາສາອື່ນນອກຈາກພາສາອັງກິດ** ຖ້າມີຄົນພຽງພໍໃນເຂດການເລືອກຕັ້ງຂອງທ່ານເວົ້າພາສານັ້ນ.

9. **ສິດທີ່ຈະຖາມຄຳຖາມກັບເຈົ້າໜ້າທີ່ເລືອກຕັ້ງກ່ຽວກັບຂັ້ນຕອນການເລືອກຕັ້ງ** ແລະ ເບິ່ງການດຳເນີນການເລືອກຕັ້ງ. ຖ້າບຸກຄົນທີ່ທ່ານຖາມບໍ່ສາມາດຕອບ ຄຳຖາມຂອງທ່ານໄດ້, ພວກເຂົາຕ້ອງສົ່ງທ່ານໄປຫາຄົນທີ່ເໝາະສົມເພື່ອໃຫ້ຄຳຕອບ. ຖ້າທ່ານມີຄວາມກໍ່ກວນ, ພວກເຂົາສາມາດຢຸດຕອບທ່ານໄດ້.

10. **ສິດທິໃນການລາຍງານກິດຈະກຳ ການເລືອກຕັ້ງທີ່ຜິດກົດ ໝາຍ ຫຼື ສໍ້ໂກງໃດໆຕໍ່**ເຈົ້າໜ້າທີ່ການເລືອກຕັ້ງ ຫຼື ເລຂາສຳນັກງານຂອລັດ.

### ແຈ້ງການພິເສດ

- ສະຖານທີ່ປ່ອນບັດແມ່ນເປີດຕັ້ງແຕ່ເວລາ 7:00 ເຊົ້າ ເຖິງ 8:00 ແລງ ຕາມມື້ທີ່ລະບຸຢູ່ໃນປຶ້ມຄູ່ມືໃຫ້ຂໍ້ມູນກ່ຽວກັບຜູ້ລົງຄະແນນສຽງຂອງເມືອງທີ່ໄດ້ສົ່ງອອກນັ້ນ.
- ຄຳແນະນຳສະເພາະກ່ຽວກັບວິທີການລົງຄະແນນສຽງ, ລວມທັງວິທີການປ່ອນບັດລົງຄະແນນສຽງຊົ່ວຄາວ, ສາມາດໄດ້ຮັບຈາກເຈົ້າໜ້າທີ່ເລືອກຕັ້ງ ຫຼື ໂດຍການອ່ານຂໍ້ມູນທີ່ສົ່ງໃຫ້ໂດຍເຈົ້າໜ້າທີ່ເລືອກຕັ້ງທ້ອງຖິ່ນຂອງທ່ານ.
- ຖ້າທ່ານເປັນຜູ້ລົງຄະແນນສຽງທີ່ໄດ້ລົງທະບຽນໃໝ່, ທ່ານອາດຈະຖືກຮ້ອງຂໍໃຫ້ສະໜອງເອກະສານການລະບຸຕົວຕົນ ຫຼື ເອກະສານອື່ນໆທີ່ເໝາະສົມຕາມກົດໝາຍຂອງລັດຖະບານກາງ. ແຕ່ກະລຸນາຮັບຊາບວ່າແຕ່ລະຄົນລ້ວນແຕ່ມີສິດປ່ອນບັດລົງຄະແນນສຽງຊົ່ວຄາວເຖິງແມ່ນວ່າລາວບໍ່ໄດ້ສະໜອງເອກະສານ.
- ມັນຜິດຕໍ່ກົດໝາຍທີ່ຈະສະແດງຕົນວ່າທ່ານມີສິດລົງຄະແນນສຽງ ເວັ້ນເສຍແຕ່ວ່າທ່ານເຮັດໄດ້ຕາມທຸກຂໍ້ກຳນົດທີ່ຈະລົງຄະແນນສຽງພາຍໃຕ້ກົດໝາຍຂອງລັດຖະບານກາງ ແລະ ລັດ.
- ການງັດແງະອຸປະກອນການລົງຄະແນນສຽງແມ່ນຜິດຕໍ່ກົດ ໝາຍ.

**ຖ້າທ່ານເຊື່ອວ່າທ່ານຖືກປະຕິເສດສິດທິເຫຼົ່ານີ້,** ໃຫ້ໂທຫາເລຂາ ສຳນັກງານຂອງລັດທາງສາຍດ່ວນແບບສ່ວນຕົວທີ່ໃຫ້ການຊ່ວຍເຫຼືອຜູ້ລົງຄະແນນສຽງ ດ້ວຍສາຍໂທບໍ່ໄດ້ເສຍຄ່າ ໄດ້ທີ່ (800) 345-VOTE (8683).

ໃນເວັບໄຊໄດ້ທີ່ **www.sos.ca.gov**

ທາງໂທລະສັບໄດ້ທີ່ **(800) 345-VOTE (8683)**

ທາງອີເມວໄດ້ທີ່ **elections@sos.ca.gov**